ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ...13...../ສພຂ.ຊຍ
ໄຊຍະບູລີ, ວັນທີ..14 ພຶດສະພາ 2021

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ວ່າດ້ວຍ ການຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ 05 ປີ (2016-2020) ແລະ ທິດທາງແຜນການ 05 ປີ (2021-2025) ຂອງອົງການກວດກາລັດແຂວງ.

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 57 ກ່ຽວກັບກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ແຈ້ງການຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 22 ເມສາ 2021 ວ່າດ້ວຍການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ສະບັບເລກທີ 402/ອກລຂ, ລົງວັນທີ 08 ເມສາ 2021.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ 05 ປີ (2016-2020) ແລະ ທິດທາງແຜນການ 05 ປີ (2021-2025) ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 26 ເມສາ 2021 ແລະ ກອງປະຊຸມ ຂອງຄະນະປະຈຳສະພາປະຊາຊົນແຂວງ ໃນຄັ້ງວັນທີ 10 ພຶດສະພາ 2021.

### ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 05 ປີ (2016-2020) ຂອງອົງການກວດກາລັດແຂວງ.**

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນຕະຫຼອດໄລຍະ 05 ປີ ທີ່ຜ່ານມາ (2016-2020) ສາມາດຍາດໄດ້ຜົນງານພົ້ນເດັ່ນຫຼາຍດ້ານ, ເປັນຕົ້ນແມ່ນການຕິດຕາມ-ກວດກາການປະຕິບັດກົດໝາຍ, ການປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ, ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ,

ການຄຸ້ມຄອງ-ນຳໃຊ້ຊັບສິນຂອງລັດ, ແນະນຳພ້ອມທັງຕິດຕາມການແຈ້ງຊັບສິນຂອງພະນັກງານ, ກວດກາ ແລະ ຊຸກຍູ້ຈັດຕັ້ງປະຕິບັດແກ້ໄຂຕາມຜົນການກວດສອບ; ກວດກາການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ ຊຶ່ງເປັນການປະກອບສ່ວນສຳຄັນໃນການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງ ຄົມດ້ວຍກົດໝາຍ ເຮັດໃຫ້ບັນດາປະກົດການຫຍໍ້ທໍ້ຫຼາຍຢ່າງໃນກົງຈັກລັດໄດ້ຮັບການແກ້ໄຂຢ່າງເຂັ້ມງວດ.

ຄຽງຄູ່ກັນນັ້ນ ກອງປະຊຸມສະພາປະຊາຊົນແຂວງ ເຫັນວ່າຍັງມີບາງບັນຫາທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂເປັນຕົ້ນ:

1. ການຜັນຂະຫຍາຍແຜນຍຸດທະສາດສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຍັງຊັກຊ້າ, ການສຶກສາອົບຮົມຜົນຮ້າຍຂອງການສໍ້ລາດບັງຫຼວງ ຕໍ່ເປົ້າໝາຍຕ່າງໆໃນທົ່ວສັງຄົມ ຍັງບໍ່ເລິກເຊິ່ງ, ບັນດາປະກົດການສວຍໃຊ້ໜ້າທີ່ຕຳແໜ່ງສໍ້ລາດບັງຫຼວງ ດ້ວຍຫຼາຍຮູບການ ແລະ ຫຼາຍລະດັບແຕກຕ່າງກັນ ຍັງແຜ່ຫຼາຍ, ສັງຄົມທັກທ້ວງຕິຕຽນຫຼາຍ ແຕ່ການກວດກາ, ສະກັດກັ້ນ ແລະ ແກ້ໄຂຍັງເຮັດໄດ້ໜ້ອຍ, ມີຫຼາຍກໍລະນີທີ່ກວດເຫັນແຕ່ບໍ່ໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ທັນການ;
2. ການກວດກາຕາມຜົນການກວດສອບ ໂດຍສະເພາະແມ່ນການກວດກາຊົງເຂດການລົງທຶນ, ການຄຸ້ມຄອງງົບປະມານ ການເກັບລາຍຮັບ-ການຄຸ້ມຄອງລາຍຈ່າຍ, ການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດ ຍັງບໍ່ທັນແຂງແຮງ, ກວດພົບເຫັນຄວາມເສຍຫາຍຫຼາຍ ແຕ່ການເກັບກູ້ເງິນຄືນເຂົ້າງົບປະມານລັດ ຍັງຊັກຊ້າບໍ່ເດັດຂາດຕາມລະບຽບກົດໝາຍ;
3. ການຮັບ ແລະ ການແກ້ໄຂຄຳຮ້ອງ-ຄຳສະເໜີ ທາງດ້ານລະບຽບການ, ກົດໝາຍ ແລະ ນິຕິກຳຈຳນວນໜຶ່ງບໍ່ທັນເລິກເຊິ່ງຮັດກຸມ, ຄຳຮ້ອງບາງເລື່ອງໄດ້ພົວພັນກັບຫຼາຍຂະແໜງການ, ຫຼາຍພາກສ່ວນ, ບາງເລື່ອງໄດ້ຄົ້ນຄວ້າແກ້ໄຂແລ້ວຍັງບໍ່ພໍໃຈ ແລະ ສົ່ງຄຳຮ້ອງໄປຫລາຍບ່ອນ ແຕ່ບໍ່ມີພາກສ່ວນໃດເປັນເຈົ້າການແກ້ໄຂ, ຈຶ່ງເຮັດໃຫ້ບາງເລື່ອງມີລັກສະນະຊັກຊ້າ-ແກ່ຍາວ ຍ້ອນການເກັບກຳຂໍ້ມູນບໍ່ຊັດເຈນ ແລະ ການຍື່ນຄຳຮ້ອງ-ຄຳສະເໜີ ຈຳນວນໜຶ່ງບໍ່ໄປຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;
4. ຄວາມຮັບຜິດຊອບການເມືອງຂອງຄະນະພັກ, ຄະນະປະທານ ແລະ ພະນັກງານຈຳນວນໜຶ່ງ ຕໍ່ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຍັງບໍ່ທັນສູງ;
5. ຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນຈຳນວນໜຶ່ງຍັງບໍ່ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານກວດກາລັດ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 05 ປີ (2021-2025) ຂອງອົງການກວດກາລັດແຂວງ.**

ຄະນະປະຈຳສະພາປະຊາຊົນແຂວງ ເຫັນດີເປັນເອກະພາບ ຕໍ່ທິດທາງແຜນການ 05 ປີ (2021-2025) ທີ່ໄດ້ກຳນົດ 04 ທິດທາງ, 05 ຄາດໝາຍສູ້ຊົນ ໃນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ໜ້າທີ່ຄວາມຮັບຜິດຊອບຂອງການຈັດຕັ້ງ ແຕ່ລະຂັ້ນ ແລະ ບຸກຄົນຢູ່ໃນອົງການຂອງລັດ, ແຕ່ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ

ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ ຄະນະປະຈຳສະພາປະຊາຊົນແຂວງ ສະເໜີໃຫ້ເອົາໃຈໃສ່ບາງຈຸດສຸມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບຂອງຄະນະນຳ ແຕ່ລະຂັ້ນ ຂອງອົງການກວດກາລັດແຂວງ ໃນການເຊື່ອມຊຶມມະຕິຂອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກແຂວງ ໃຫ້ແກ່ພະນັກງານ-ລັດຖະກອນ ເພື່ອຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໄດ້ກຳນົດໄວ້ໃນກົດໝາຍ;
2. ປັບປຸງໂຄງປະກອບການຈັດຕັ້ງ, ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງອົງການກວດກາລັດແຂວງ ໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນໄລຍະໃໝ່ ແລະ ຕາມກົດໝາຍກຳນົດ;
3. ເອົາໃຈໃສ່ຜັນຂະຫຍາຍກົດໝາຍ ແລະ ສ້າງນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານກວດກາລັດ ແລະ ການຕ້ານການສໍ້ລາດບັງຫຼວງ ໃຫ້ຄົບຖ້ວນ, ຮັດກຸມ, ສາມາດເປັນບ່ອນອີງໃນການປະຕິບັດພາລະບົດບາດ, ສິດ, ຫນ້າທີ່ ພ້ອມທັງຈັດຕັ້ງເຜີຍແຜ່ເຊື່ອມຊຶມ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ເພີ່ມທະວີການສະກັດກັ້ນ-ຕ້ານການສໍ້ລາດບັງຫຼວງ ຕໍ່ເປົ້າໝາຍໃນຂົງເຂດລາຍຮັບ-ລາຍຈ່າຍງົບປະມານ, ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ (ການກຳນົດຫົວໜ່ວຍລາຄາ, ມາດຕະຖານເຕັກນິກ, ການປະມູນຈັດຊື້-ຈັດຈ້າງ), ການປະຕິບັດວິໄນແຜນການ-ການເງິນ ແລະ ສືບຕໍ່ວຽກງານແຈ້ງຊັບສິນ ຂອງພະນັກງານລັດ ໂດຍສະເພາະໃນຂົງເຂດທີ່ມີລາຍຮັບ, ເຕັກນິກວິຊາການກໍ່ສ້າງ, ຄຸ້ມຄອງຊັບພະຍາກອນ ແລະ ການໃຫ້ການບໍລິການ;
5. ປັບປຸງກົນໄກການຮັບ ແລະ ການພິຈາລະນາແກ້ໄຂຄຳຮ້ອງ-ຄຳສະເໜີ ໃຫ້ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ເອົາໃຈໃສ່ປະສານສົມທົບກັບບັນດາອົງການທີ່ກ່ຽວຂ້ອງເພື່ອເຮັດໃຫ້ການແກ້ໄຂຄຳຮ້ອງ-ຄຳສະເໜີ ໃຫ້ມີຄວາມເປັນເອກະພາບ ແລະ ໃຫ້ມີບ່ອນສິ້ນສຸດ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງອົງການກວດກາລັດແຂວງ**

ກອງປະຊຸມ ເຫັນດີຮັບຮອງເອົາ 4 ມາດຕະການ ຕາມການສະເໜີ ຂອງອົງການກວດກາລັດແຂວງ; ກອງປະຊຸມສະພາປະຊາຊົນແຂວງ ສະເໜີໃຫ້ເອົາໃຈໃສ່ບາງມາດຕະການ ດັ່ງນີ້:

1. ອອກຄຳແນະນຳ ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາປະຊາຊົນແຂວງ ຊຸດທີ II ກ່ຽວກັບວຽກງານຂອງອົງການກວດກາລັດແຂວງ ໃຫ້ເປັນແຜນການ, ແຜນງານ ເພື່ອສະດວກໃນການຈັດຕັ້ງປະຕິບັດແຕ່ລະໄລຍະ, ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານລັດຖະກອນ ຂອງຕົນ ຮັບຮູ້ເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ສະຫຼຸບປະເມີນຜົນຢ່າງເປັນປົກກະຕິ;
2. ເອົາໃຈໃສ່ໂຄສະນາ, ເຜີຍແຜ່ບັນດານິຕິກຳ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ແກ້ໄຂຢ່າງເດັດຂາດ, ເຂັ້ມງວດຕໍ່ເປົ້າໝາຍທີ່ລະເມີດກົດໝາຍ ຕາມຜົນການກວດສອບ ແລະ ມີຫຼັກຖານຢ່າງຄົບຖ້ວນຈະແຈ້ງ;

4. ຄະນະນຳແຕ່ລະຂັ້ນ ຕ້ອງເພີ່ມທະວີການຊີ້ນຳ-ນຳພາ ຕໍ່ການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຊຸກຍູ້, ຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ແຕ່ລະໄລຍະໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການກວດກາລັດແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນແຂວງ ດຳເນີນການຕິດຕາມ ກວດກາ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ.**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເສັງນິສັນ ຄຳສັນເພັງ